

ໂດຍ ປະທານທອມມັສ ແອັສ ມອນສັນ

# ຮັບໃຊ້ພຣະຜູ້ເປັນເຈົ້າດ້ວຍຄວາມຮັກ

ອົງພຣະເຢຊູຄຣິດເຈົ້າ ໄດ້ສອນວ່າ, "ຜູ້ໃດກໍຕາມທີ່ປາກຮັກສາຊີວິດຂອງຕົນໄວ້ໃຫ້ພົ້ນ ຈະເສຍຊີວິດ: ແຕ່ຜູ້ໃດກໍຕາມທີ່ສະລະຊີວິດຂອງຕົນເພາະເຫັນແກ່ເຮົາ, ຜູ້ນັ້ນຈະຊ່ອຍຊີວິດຂອງຕົນນັ້ນໃຫ້ພົ້ນ" (ລູກາ 9:24).

"ຂ້າພະເຈົ້າເຊື່ອ," ປະທານທອມມັສ ແອັສ ມອນສັນ ໄດ້ກ່າວ, "ພຣະຜູ້ຊ່ອຍໃຫ້ລອດບອກເຮົາວ່າ ຍົກເວັ້ນແຕ່ ເຮົາຈະສະລະຕົນເອງໃນການຮັບໃຊ້ຄົນອື່ນ, ຊີວິດຂອງເຮົາຈະບໍ່ມີຄວາມໝາຍແນວໃດ. ຜູ້ທີ່ມີຊີວິດເພື່ອຕົນເອງ ໃນທີ່ສຸດຈະສູນເສຍຊີວິດຂອງຕົນໄປລ້າໆ, ໃນຂະນະທີ່ຜູ້ທີ່ສະລະຕົນເອງໃນການຮັບໃຊ້ຄົນອື່ນເຕີບໂຕຂຶ້ນ ແລະ ຈະເລີນກ້າວໜ້າ —ແລະ ຈະຊ່ອຍຊີວິດຂອງຕົນໃຫ້ພົ້ນໄດ້."[1]

ໃນບົດຄວາມດັ່ງຕໍ່ໄປນີ້ ຈາກການປະຕິບັດສາດສະໜາກິດຂອງປະທານມອນສັນ, ເພິ່ນໄດ້ເຕືອນໃຈໄພ່ພົນ ຍຸກສຸດທ້າຍວ່າເຂົາເຈົ້າເປັນພຣະຫັດຂອງພຣະຜູ້ເປັນເຈົ້າ ແລະວ່າພອນແຫ່ງນິລັນດອນລໍຖ້າຄົນທີ່ຮັບໃຊ້ ຄົນອື່ນຢ່າງຊື່ສັດ.

## ການຮັບໃຊ້ໃນພຣະວິຫານ

"ການຮັບໃຊ້ອັນຍິ່ງໃຫຍ່ໄດ້ເກີດຂຶ້ນ ເມື່ອເຮົາກະທຳພິທີການຕ່າງໆເພື່ອຄົນທີ່ໄດ້ລ່ວງລັບໄປແລ້ວ. ໃນຫລາຍກໍລະນີເຮົາບໍ່ຮູ້ຈັກຜູ້ທີ່ເຮົາກະທຳພິທີແທນ. ເຮົາບໍ່ຫວັງການຂອບໃຈ, ທັງເຮົາບໍ່ຮູ້ວ່າ ເຂົາເຈົ້າຈະຮັບເອົາສິ່ງທີ່ເຮົາກະທຳແທນເຂົາເຈົ້າຫລືບໍ່. ເຖິງຢ່າງໃດກໍຕາມ, ເຮົາໄດ້ຮັບໃຊ້, ແລະໃນການປະຕິບັດນັ້ນ ເຮົາໄດ້ຮັບສິ່ງທີ່ເຮົາບໍ່ສາມາດໄດ້ຮັບໃນວິທີອື່ນ. ເຮົາກາຍເປັນຜູ້ຊ່ອຍໃຫ້ລອດຢູ່ເທິງພູສີໂອນ. ເຊັ່ນດຽວກັບພະຜູ້ຊ່ອຍໃຫ້ລອດໄດ້ສະລະຊີວິດເປັນເຄື່ອງຖະຫວາຍແທນເຮົາ, ເຮົາກໍຄວນເປັນເຊັ່ນນັ້ນໜ້ອຍໜຶ່ງ ຄືກັນ ເມື່ອເຮົາກະທຳພິທີແທນຜູ້ທີ່ບໍ່ສາມາດກ້າວໄປໜ້າ ຍົກເວັ້ນແຕ່ເຮົາຈະເຮັດແທນເຂົາໃນ ພະວິຫານຢູ່ໃນໂລກນີ້."[2]

## ເຮົາເປັນພຣະຫັດຂອງພຣະຜູ້ເປັນເຈົ້າ

"ອ້າຍເອື້ອຍນ້ອງທັງຫລາຍ, ເຮົາຖືກອ້ອມຮອບດ້ວຍຜູ້ຄົນທີ່ຕ້ອງການຄວາມສົນໃຈ, ການຊຸກຍູ້, ຄວາມສະໜັບສະໜູນ, ຄວາມປອບໂຍນ, ຄວາມເມດຕາຂອງເຮົາ—ອາດເປັນຄົນໃນຄອບຄົວ, ໝູ່ເພື່ອນ, ຄົນຮູ້ຈັກກັນ, ຫລື ຄົນແປກໜ້າ. ເຮົາເປັນພຣະຫັດຂອງພຣະຜູ້ເປັນເຈົ້າຢູ່ໃນໂລກນີ້, ໂດຍທີ່ຖືກບັນຊາໃຫ້ຮັບໃຊ້ ແລະ ຄ້ຳຊູລູກໆຂອງພຣະອົງ. ພຣະອົງເພິ່ງພາເຮົາແຕ່ລະຄົນ. ...

"ການຮັບໃຊ້ນັ້ນ ຊຶ່ງເຮົາທຸກຄົນໄດ້ຖືກເອີ້ນແມ່ນການຮັບໃຊ້ຂອງອົງພຣະເຢຊູຄຣິດເຈົ້າ."[3]

## ການຮັບໃຊ້ຢູ່ໃນຮົ່ມເງົາຂອງພຣະຜູ້ຊ່ອຍໃຫ້ລອດ

"ຢູ່ໃນໂລກໃໝ່, ພຣະຜູ້ເປັນເຈົ້າທີ່ໄດ້ຟື້ນຄືນຊີວິດໄດ້ປະກາດວ່າ, 'ເຈົ້າຮູ້ສິ່ງທີ່ເຈົ້າຈະຕ້ອງເຮັດໃນສາດສະໜາຈັກຂອງເຮົາ; ເພາະງານທີ່ເຈົ້າເຫັນເຮົາເຮັດມາແລ້ວສິ່ງນັ້ນເຈົ້າຕ້ອງເຮັດເໝືອນກັນ ເພາະສິ່ງທີ່ເຈົ້າເຫັນເຮົາເຮັດ

ມາແລ້ວ ສິ່ງນັ້ນເຈົ້າຈົ່ງເຮັດ' [3 ນີໄຟ 27:21].

"ເຮົາເປັນພອນແກ່ຄົນອື່ນເມື່ອເຮົາຮັບໃຊ້ຢູ່ໃນຮົ່ມເງົາຂອງ 'ພຣະເຢຊູແຫ່ງນາຊາເຣັດ ... ຜູ້ໄດ້ໄປທຸກຫົນ ທຸກແຫ່ງເຮັດຄຸນງາມຄວາມດີ' [ກິດຈະການ 10:38]. ຂໍພຣະເຈົ້າຈົ່ງອວຍພອນເຮົາໃຫ້ພົບເຫັນຄວາມສຸກໃນການຮັບໃຊ້ພຣະບິດາຜູ້ສະຖິດໃນສະຫວັນຂອງເຮົາ ເມື່ອເຮົາຮັບໃຊ້ລູກໆຂອງພຣະອົງຢູ່ໃນໂລກນີ້."[4]

## ຄວາມຈຳເປັນທີ່ຕ້ອງຮັບໃຊ້

"ເຮົາຕ້ອງໄດ້ຮັບໂອກາດທີ່ຈະຮັບໃຊ້. ສຳລັບສະມາຊິກຜູ້ທີ່ບໍ່ເຂັ້ມແຂງ ຫລື ຜູ້ທີ່ຫລີກເວັ້ນ ແລະ ບໍ່ເອົາຈິງເອົາຈັງ, ເຮົາສາມາດອະທິຖານ ສະແຫວງຫາວິທີທີ່ຈະເອື້ອມອອກໄປຫາເຂົາເຈົ້າໄດ້. ການຂໍໃຫ້ເຂົາເຈົ້າຮັບໃຊ້ໃນຕຳແໜ່ງໃດຕຳແໜ່ງໜຶ່ງອາດເປັນສິ່ງຈູງໃຈໃຫ້ເຂົາເຈົ້າຫັນກັບມາເຂັ້ມແຂງກໍໄດ້. ແຕ່ຜູ້ນຳເຫລົ່ານັ້ນທີ່ສາມາດຊ່ອຍເຫລືອໃນເລື່ອງນີ້ບາງເທື່ອອາດບໍ່ກ້າເຮັດ. ເຮົາຕ້ອງຈື່ຈຳວ່າ ຜູ້ຄົນປ່ຽນແປງໄດ້. ເຂົາເຈົ້າສາມາດປະຖິ້ມນິໄສທີ່ບໍ່ດີໄດ້. ເຂົາເຈົ້າສາມາດກັບໃຈຈາກການລ່ວງລະເມີດຕ່າງໆໄດ້. ເຂົາເຈົ້າສາມາດດຳລົງຖານະປະໂລຫິດຢ່າງມີຄ່າຄວນໄດ້. ແລະ ເຂົາເຈົ້າສາມາດຮັບໃຊ້ພຣະຜູ້ເປັນເຈົ້າຢ່າງພາກພຽນໄດ້."[5]

## ເຮົາໄດ້ເຮັດທຸກສິ່ງທີ່ເຮົາຄວນເຮັດແລ້ວບໍ?

"ໂລກນີ້ຕ້ອງການຄວາມຊ່ອຍເຫລືອຂອງເຮົາ. ເຮົາໄດ້ເຮັດທຸກສິ່ງທີ່ເຮົາຄວນເຮັດແລ້ວບໍ? ເຮົາຍັງຈື່ຈຳຖ້ອຍຄຳຂອງປະທານຈອນ ເທເລີ ຢູ່ບໍທີ່ວ່າ: 'ຖ້າຫາກທ່ານບໍ່ຂະຫຍາຍການເອີ້ນຂອງທ່ານ, ແລ້ວພຣະເຈົ້າຈະໃຫ້ທ່ານຮັບຜິດຊອບຕໍ່ຄົນທີ່ທ່ານອາດຊ່ອຍກູ້ຖ້າຫາກທ່ານໄດ້ເຮັດໜ້າທີ່ຂອງທ່ານ.'? [Teachings of Presidents of the Church: John Taylor (2001), 164]. ມີຕີນທີ່ຈະຊ່ອຍຍ່າງ, ມີມືທີ່ຈະຊ່ອຍຈັບ, ມີຈິດໃຈທີ່ຈະຊ່ອຍຊຸກຍູ້, ມີໃຈທີ່ຈະດົນໃຈ, ແລະ ມີຈິດວິນຍານທີ່ ຈະຊ່ອຍໃຫ້ລອດ. ພອນນິລັນດອນລໍຖ້າທ່ານຢູ່. ທ່ານມີສິດທິພິເສດທີ່ຈະບໍ່ເປັນຜູ້ຊົມ ແຕ່ເປັນຜູ້ມີສ່ວນຮ່ວມໃນເວທີແຫ່ງການ ... ຮັບໃຊ້."[6]


#### ແຫລ່ງອ້າງອີງ

1. "ເຮົາໄດ້ເຮັດສິ່ງໃດແດ່ສຳລັບບາງຄົນໃນມື້ນີ້?" Liahona, Nov. 2009, 85.
2. "Until We Meet Again," Liahona, May 2009, 113–14.
3. "ເຮົາໄດ້ເຮັດສິ່ງໃດແດ່ສຳລັບບາງຄົນໃນມື້ນີ້?" 86, 87.
4. "The Savior's Call to Serve," Liahona, Aug. 2012, 5.
5. "See Others as They May Become," Liahona, Nov. 2012, 68.
6. "Willing and Worthy to Serve," Liahona, May 2012, 69.
7. Teaching, No Greater Call: A Resource Guide for Gospel Teaching (1999), 12


#### ການສອນຈາກຂ່າວສານນີ້

"ຖ້າຫາກທ່ານມີຄວາມຮັກເໝືອນດັ່ງພຣະຄຣິດ, ທ່ານຈະສາມາດຕຽມທີ່ຈະສອນພຣະກິດຕິຄຸນໄດ້ດີກວ່າເກົ່າ. ທ່ານຈະໄດ້ຮັບການດົນໃຈໃຫ້ຊ່ອຍເຫລືອຄົນອື່ນຮູ້ຈັກພຣະຜູ້ຊ່ອຍໃຫ້ລອດ ແລະ ຕິດຕາມພຣະອົງ."[7] ໃຫ້ຄິດອະທິຖານເພື່ອຂໍຄວາມໃຈບຸນຕື່ມອີກສຳລັບຄົນທີ່ທ່ານຢ້ຽມຢາມ. ເມື່ອທ່ານພັດທະນາຄວາມຮັກຢ່າງພຣະຄຣິດຕໍ່ເຂົາເຈົ້າ, ທ່ານຈະສາມາດຮັບໃຊ້ໃນວິທີທາງທີ່ມີຄວາມໝາຍຫລາຍກວ່າເກົ່າ ທັງພຣະຜູ້ເປັນເຈົ້າ ແລະ ຜູ້ທີ່ທ່ານສອນ.

## ຊາວໜຸ່ມ

## ລະດູແລ້ງແຫ່ງການຮັບໃຊ້

### ໂດຍ ເອລີຊາເບັດ ບະໄລ້

ໃນລະດູແລ້ງປີໜຶ່ງ ຂ້ານ້ອຍໄດ້ໄປຕ່າງປະເທດ ເພື່ອຊ່ອຍເຫລືອເດັກນ້ອຍທີ່ມີຄວາມຕ້ອງການພິເສດ. ຕອນຂ້ານ້ອຍໄດ້ພົບເຫັນພວກເດັກນ້ອຍເຫລົ່ານັ້ນ, ຂ້ານ້ອຍມີຄວາມກະວົນກະວາຍຫລາຍ. ຂ້ານ້ອຍເວົ້າພາສາຂອງພວກເຂົາບໍ່ໄດ້, ແຕ່ຂ້ານ້ອຍໄວ້ວາງໃຈວ່າ ພຣະວິນຍານຈະຊ່ອຍເຫລືອຂ້ານ້ອຍຕອນຂ້ານ້ອຍເວົ້າລົມນຳເຂົາ. ເມື່ອຂ້ານ້ອຍລ້ຽງເຄີຍກັບເດັກນ້ອຍແຕ່ລະຄົນ, ຂ້ານ້ອຍຮູ້ວ່າ ພາສາບໍ່ໄດ້ເປັນສິ່ງກີດກັນຄວາມຮັກ. ຂ້ານ້ອຍໄດ້ຫລິ້ນ, ມ່ວນຊື່ນ, ແລະ ເຮັດກິດຈະກຳກັບເດັກນ້ອຍ ແລະ ອົດຮັກເຂົາບໍ່ໄດ້. ຂ້ານ້ອຍໄດ້ເຫັນຄວາມຮັກທີ່ພຣະບິດາເທິງສະຫວັນມີຕໍ່ລູກໆຂອງພຣະອົງ, ແລະ ຄວາມສຸກທີ່ມາສູ່ໃຈຂອງຂ້ານ້ອຍນັ້ນແມ່ນເກີນກວ່າທີ່ຈະພັນລະນາໄດ້.

ຕອນຂ້ານ້ອຍຮັບໃຊ້ຄົນອື່ນ, ຂ້ານ້ອຍບໍ່ພຽງແຕ່ຮັກຄົນທີ່ຂ້ານ້ອຍຮັບໃຊ້ເທົ່ານັ້ນ ແຕ່ຍັງຮັກພຣະບິດາເທິງສະຫວັນ ນຳອີກ. ແທ້ຈິງແລ້ວຂ້ານ້ອຍໄດ້ມາຮູ້ຈັກວ່າ "ເມື່ອພວກທ່ານຮັບໃຊ້ເພື່ອນມະນຸດດ້ວຍກັນ ພວກທ່ານກໍຮັບໃຊ້ພຣະເຈົ້າຂອງພວກທ່ານນັ້ນເອງ" (ໂມໄຊຢາ 2:17). ຈຸດປະສົງຂອງການຮັບໃຊ້ຂອງຂ້ານ້ອຍ, ບໍ່ວ່າຈະເປັນໂຄງການໃຫຍ່ ຫລື ນ້ອຍ ຂອງການກະທຳດ້ວຍຄວາມເມດຕາ, ມັນເປັນການສັນລະເສີນພຣະເຈົ້າ (ເບິ່ງ ມັດທາຍ 5:16). ຂ້ານ້ອຍຫວັງວ່າ ເມື່ອຂ້ານ້ອຍຮັບໃຊ້ຄົນອື່ນ, ຜູ້ຄົນຈະເຫັນຄວາມຮັກຂອງຂ້ານ້ອຍທີ່ມີຕໍ່ພຣະບິດາເທິງສະຫວັນ ແລະ ເຫັນຄວາມສະຫວ່າງຂອງພຣະຄຣິດທີ່ຮຸ່ງແຈ້ງຢູ່ໃນຂ້ານ້ອຍ.

ຜູ້ຂຽນອາໄສຢູ່ລັດເວີຈິນເຍຍ, ສະຫະລັດອາເມຣິກາ.

## ບ້ວງຮັກ

ໃຫ້ຜູ້ໃຫຍ່ຊ່ອຍເຈົ້າຕັດເຈ້ຍເຮັດເປັນຕ່ອນນ້ອຍໆ 28 ຕ່ອນ, ແຕ່ລະຕ່ອນໃຫ້ກວ້າງປະມານ 2.5 ຊັງຕີແມັດ ແລະ ຍາວປະມານ 20 ຊັງຕີແມັດ. ທຸກມື້ໃນເດືອນນີ້, ໃຫ້ເຮັດບາງສິ່ງທີ່ເປັນການຮັບໃຊ້ ເພື່ອສະແດງຄວາມຮັກຂອງເຈົ້າຕໍ່ຄົນອື່ນ. ເຈົ້າສາມາດຊ່ອຍພໍ່ແມ່ທຳຄວາມສະອາດບ້ານ ຫລື ຂຽນຈົດໝາຍນ້ອຍເຖິງເພື່ອນບ້ານ.

ຂຽນສິ່ງທີ່ເຈົ້າໄດ້ຮັບໃຊ້ແຕ່ລະມື້ໄວ້ໃນເຈ້ຍນ້ອຍ, ແລ້ວໃຫ້ໃຊ້ເທັບ ຫລື ກາວຕໍ່ເຈ້ຍສອງສົ້ນໃສ່ກັນເຮັດເປັນບ້ວງ. ເຈົ້າສາມາດຕໍ່ບ້ວງໃໝ່ຕື່ມໃສ່ໄດ້ ໂດຍການສອດເຈ້ຍຕ່ອນໃໝ່ໃສ່ບ້ວງອັນທຳອິດ ແລ້ວໃຊ້ເທັບ ຫລື ກາວຕໍ່ສອງສົ້ນເຈ້ຍໃສ່ກັນເປັນບ້ວງອັນທີສອງ. ເບິ່ງບ້ວງຮັກຂອງເຈົ້າເຕີບຂະຫຍາຍແມ! ເຈົ້າສາມາດຕື່ມເສັ້ນຮັບໃຊ້ຂອງເຈົ້າໃສ່ຕື່ມອີກກໍໄດ້ຫລັງຈາກເດືອນກຸມພາໝົດໄປແລ້ວ.

© 2014 ໂດຍ Intellectual Reserve, Inc. ສະຫງວນລິຂະສິດທຸກປະການ.
ຈັດພິມໃນສະຫະລັດອາເມຣິກາ. ສະບັບເປັນພາສາອັງກິດໄດ້ຮັບອະນຸຍາດ: 6/13. ການແປໄດ້ຮັບອະນຸຍາດ: 6/13. ແປຈາກ ***First Presidency Message, February 2014.*** Laotian. 10862 331

# ພາລະກິດແຫ່ງສະຫວັນຂອງພຣະເຢຊູຄຣິດ: ຜູ້ລ້ຽງທີ່ດີ

**ສັດທາ • ຄອບຄົວ • ສົງເຄາະ**

*ໃຫ້ສຶກສາຂ່າວສານນີ້ດ້ວຍການອະທິຖານ ແລະ ສະແຫວງຫາເພື່ອຈະໄດ້ຮູ້ຈັກສິ່ງທີ່ຄວນແບ່ງປັນ. ການເຂົ້າໃຈຊີວິດ ແລະ ພາລະກິດຂອງພຣະຜູ້ຊ່ອຍໃຫ້ລອດຈະເພີ່ມສັດທາຂອງທ່ານໃນພຣະອົງ ແລະ ເປັນພອນໃຫ້ແກ່ຄົນທີ່ທ່ານດູແລຜ່ານການຢ້ຽມສອນໄດ້ແນວໃດ? ສຳລັບລາຍລະອຽດເພີ່ມເຕີມ, ໃຫ້ເປີດເບິ່ງທີ່ reliefsociety.lds.org.*

*ນີ້ແມ່ນພາກໜຶ່ງໃນລຳດັບລາຍການຂອງຂ່າວສານການຢ້ຽມສອນທີ່ກ່ຽວກັບພາລະກິດຂອງພຣະຜູ້ຊ່ອຍ ໃຫ້ລອດ.*

ພຣະເຢຊູຄຣິດ, ຜູ້ລ້ຽງທີ່ດີ, ໄດ້ສອນວ່າ:

"ມີຄົນໃດແດ່ໃນພວກເຈົ້າມີແກະຢູ່ຮ້ອຍໂຕ ແລະ ຕົວໜຶ່ງເສຍໄປຄົນນັ້ນຈະເຮັດແນວໃດ? ລາວຈະບໍ່ປະເກົ້າສິບ ເກົ້າໂຕນັ້ນໄວ້ໃນທົ່ງຫຍ້າ ແລະ ໄປຊອກຫາໂຕທີ່ເສຍນັ້ນຈົນພົບບໍ? …

"ເຮົາບອກເຈົ້າທັງຫລາຍວ່າ … ສະຫວັນຈະມີຄວາມຊົມຊື່ນຍິນດີຫລາຍທີ່ຄົນບາບຜູ້ໜຶ່ງຖິ້ມໃຈເກົ່າ ເອົາໃຈໃໝ່" (ລູກາ 15:4, 7).

ເມື່ອເຮົາເຂົ້າໃຈວ່າພຣະເຢຊູຄຣິດເປັນຜູ້ລ້ຽງທີ່ດີ, ຄວາມປາດຖະໜາຂອງເຮົາທີ່ຈະຕິດຕາມຕົວຢ່າງຂອງ ພຣະອົງ ແລະ ຮັບໃຊ້ຄົນອື່ນທີ່ຂາດສົນຈະເພີ່ມທະວີຂຶ້ນ ພຣະເຢຊູໄດ້ກ່າວວ່າ: "ເຮົານີ້ແຫລະເປັນຜູ້ລ້ຽງທີ່ດີ, ເຮົາຮູ້ຈັກແກະຂອງເຮົາ, ແລະ ແກະຂອງເຮົາກໍຮູ້ຈັກເຮົາ. … ເຮົາເຕັມໃຈສະລະຊີວິດເພື່ອຝູງແກະຂອງເຮົາ" (ໂຢຮັນ 10:14–15). ເພາະການຊົດໃຊ້ຂອງພຣະຄຣິດ, ບໍ່ມີຄົນໃດໃນພວກເຮົາຈະຫລົງທາງໄປໄກຈົນວ່າເຮົາຊອກຫາທາງກັບບ້ານບໍ່ເຫັນ (ເບິ່ງ ລູກາ 15).

ປະທານທອມມັສ ແອັສ ມອນສັນ ໄດ້ກ່າວວ່າ, "ເຮົາມີໜ້າທີ່ຮັບຜິດຊອບທີ່ຈະດູແລຝູງແກະ. … ຂໍໃຫ້ເຮົາແຕ່ລະຄົນຈົ່ງກ້າວອອກໄປຮັບໃຊ້."[1]

### ຈາກພຣະຄຳພີ

ເພງສັນລະເສີນ 23; ເອຊາຢາ 40:11; ໂມໄຊຢາ 26:21

### ຈາກປະຫວັດສາດຂອງເຮົາ

ເອລິຊາເບັດ ແອນ ວິດນີ, ຜູ້ໄດ້ໄປຮ່ວມການປະຊຸມສະມາຄົມສະຕີສົງເຄາະເທື່ອທຳອິດ, ໄດ້ກ່າວເຖິງການປ່ຽນໃຈ ເຫລື້ອມໃສຂອງນາງໃນປີ 1830 ວ່າ: "ທັນທີທີ່ຂ້າພະເຈົ້າໄດ້ຍິນພຣະກິດຕິຄຸນໃນຂະນະທີ່ພວກແອວເດີປະກາດມັນ, ຂ້າພະເຈົ້າກໍຮູ້ວ່າມັນເປັນສຽງຂອງຜູ້ລ້ຽງທີ່ດີ."[2] ເອລິຊາເບັດໄດ້ເຮັດຕາມສຽງຂອງຜູ້ລ້ຽງທີ່ດີ ແລະ ໄດ້ຮັບບັບຕິສະມາ ແລະ ຮັບການຢືນຢັນ.

ເຊັ່ນດຽວກັນ ເຮົາກໍສາມາດໄດ້ຍິນສຽງຂອງຜູ້ລ້ຽງທີ່ດີ ແລະ ແບ່ງປັນຄຳສອນຂອງພຣະອົງ ໃຫ້ກັບຄົນອື່ນໄດ້ຄືກັນ. ປະທານມອນສັນໄດ້ກ່າວວ່າ, "ເຮົາເປັນພຣະຫັດຂອງພຣະຜູ້ເປັນເຈົ້າຢູ່ໃນໂລກນີ້, ໂດຍທີ່ຖືກບັນຊາໃຫ້ຮັບໃຊ້ ແລະ ຄ້ຳຊູລູກໆຂອງພຣະອົງ."[3]

ເຊັ່ນດຽວກັບຜູ້ລ້ຽງທີ່ດີໄປຊອກຫາແກະໂຕໜຶ່ງທີ່ເສຍໄປ, ພໍ່ແມ່ກໍຈະຊອກຫາລູກຜູ້ທີ່ອອກນອກທາງໄປຄືກັນ. ປະທານເຈມ ອີ ຟາວ (1920–2007), ທີ່ປຶກສາທີສອງໃນຝ່າຍປະທານສູງສຸດ, ໄດ້ກ່າວວ່າ: "ຕໍ່ພໍ່ແມ່ທີ່ເຈັບປວດໃຈ ຜູ້ຊອບທຳ, ພາກພຽນ, ແລະ ອະທິຖານໃນການສອນລູກໆທີ່ບໍ່ເຊື່ອຟັງຂອງເຂົາເຈົ້າ, ພວກເຮົາກ່າວກັບທ່ານວ່າ, ຜູ້ລ້ຽງທີ່ດີດູແລເຂົາຢູ່. ພຣະເຈົ້າຮູ້ຈັກ ແລະ ເຂົ້າໃຈຄວາມເສົ້າສະຫລົດໃຈຂອງທ່ານ. ຍັງມີຄວາມຫວັງຢູ່."[4]

ແຫລ່ງອ້າງອີງ


1. Thomas S. Monson, "Heavenly Homes, Forever Families," Liahona, June 2006, 70.
2. Elizabeth Ann Whitney, in Daughters in My Kingdom: The History and Work of Relief Society (2011), 128.
3. Thomas S. Monson, "What Have I Done for Someone Today?" Liahona, Nov. 2009, 86.
4. James E. Faust, "Dear Are the Sheep That Have Wandered," Liahona, May 2003, 68.


### ເຮົາສາມາດເຮັດຫຍັງແດ່?

1. ການຮູ້ຈັກວ່າພຣະຜູ້ຊ່ອຍໃຫ້ລອດເປັນຜູ້ລ້ຽງທີ່ດີ ນຳຄວາມສະຫງົບມາສູ່ຊີວິດຂອງເຮົາແນວໃດ?
2. ເຮົາຈະປະຕິບັດຕໍ່ຄົນທີ່ "ອອກໄປ" ຈາກຄວາມເຂັ້ມແຂງໃນສາດສະໜາຈັກ ຫລື ຄົນຕ່າງສາດສະໜາໃນວິທີໃດ?
3. ເຮົາຈະໃຫ້ກຳລັງໃຈພໍ່ແມ່ຜູ້ທີ່ລູກໄດ້ອອກໄປຈາກການດຳລົງຊີວິດຕາມພຣະກິດຕິຄຸນແນວໃດ?

2014 ໂດຍ Intellectual Reserve, Inc. ສະຫງວນລິຂະສິດທຸກປະການ. ຈັດພິມໃນສະຫະລັດອາເມຣິກາ. ສະບັບເປັນພາສາອັງກິດໄດ້ຮັບອະນຸຍາດ: 6/13. ການແປໄດ້ຮັບອະນຸຍາດ: 6/13. ແປຈາກ *Visiting Teaching Message, February 2014*. Laotian. 10862 331